# ເນເຫມີ (ເນເຮມຢາ)

ໃຈຄວາມສຳຄັນ ການຈັດແປງໃໝ່

ຂໍ້ຄວາມສຳຄັນ ໑:໙

ຈຳນວນບົດ ໑໓ ບົດ

ເຣື້ອງເກີດຂຶ້ນໃນປີ ໔໔໕ ຈົນເຖິງປີ ໔໒໐ ກ່ອນ ຄ.ສ.

ໜັງສືທີ່ຂຽນໃນຄາວດຽວກັນ ມາລາກີ

ຜູ້ຂຽນ ເນເໝີ

## ໑. ເຣື້ອງຂອງທ່ານເນເຫມີ

ທ່ານເນເໝີຜູ້ ຂຽນໜັງສືນີ້ເປັນເຈົ້າພະນັກງານ ຂອງ ກະສັດເມືອງຊູເຊເພິ່ນໄດ້ຍິນຂ່າວບໍ່ດີວ່າກຳແພງໄດ້ເພລົງ ສນັ້ນເພິ່ນຈຶ່ງຂໍອະນຸຍາດກັບຄືນກຸງເຢຣູຊາເລັມເພື່ອຊ່ວຍເຫລືອພວກພີ່ນ້ອງຂອງຕົນ (ບົດ ທີ ໑ ແລະ ໒) ເພິ່ນໄດ້ໄປຢູ່ທີ່ກຸງເຢຣູຊາເລັມພາຍຫລັງທ່ານເອເຊດຣາເຊ ແລະໄດ້ຢູ່ທີ່ນັ້ນເປັນເວລາ ໑໒ ປີ ເພິ່ນເປັນຄົນທີ່ນັບຖືພຣະເຈົ້າມີໃຈດີ ແລະກ້າຫານ ພ້ອມທັງເປັນຜູ້ມີອຳນາດໃນທາງບ້ານເມືອງດ້ວຍຄື ເປັນຜູ້ກຳກັບການກໍ່ສ້າງກຳແພງໃໝ່ ແລະເປັນຜູ້ຈັດການວຽກງານພາຍໃນເມືອງ.

## ໒. ວ່າດ້ວຍບົດສຳຄັນ

ມືເບື້ອງນຶ່ງສ້າງກຳແພງແລະອີກເບື້ອງນຶ່ງຖືອາວຸດ ເນເໝີ ໔:໑໗

ການບ່ຽນໃຈມາອ່ານພຣະຄັມພີ — ເນເຫມີ ບົດ ໘:໑–໘

ມີຄວາມຍິນດີໃນພຣະເຈົ້າ — ໘:໙–໑໒

ການນ້ອມຟັງແລະຖືເທສການຕາມພຣະບັນຍັດ — ໘:໑໓–໑໘

ການຖອມຕົວລົງແລະການຍອມຜິດ — ໙:໑–໓໗

ການຕັ້ງສັນຍາໃໝ່ກັບພຣະເຈົ້າ — ໙:໓໘–໑໐:໒໗

ການຕັດສິນໃຈຖືຂໍ້ບັນຍັດ — ໑໐:໒໘–໓໙

ການສັນຍາກັນກັບຄົນຕ່າງປະເທດ — ໑໓:໑–໓

ການບໍ່ຍອມຕົວນັບຖືພຣະວິຫານ — ໑໓:໓–໙

ການບໍ່ເອົາໃຈໃສ່ໃນຂອງຖວາຍ — ໑໓:໑໐–໑໔

ການບໍ່ຖືວັນຊະບາໂຕ — ໑໓:໑໔–໒໒

ການເອົາກັນກັບຄົນທີ່ບໍ່ເຊື່ອພຣະເຈົ້າ — ໑໓:໒໓–໓໑

## ໓. ການແບ່ງເປັນພາກ

ພາກທີ ໑ ການສ້າງກຳແພງໃໝ່ — ບົດ ໑–໖

ກ. ຄຳອ້ອນວອນຂໍກັບຄົນເມື່ອສ້າງກຳແພງຂອງເນເຫມີ — ບົດ ໑

ຂ. ເນເຫມີເຖິງເມືອງເຢຣູຊາເລັມ — ບົດ ໒

ຄ. ການສ້າງກຳແພງ — ບົດ ໓–໖

ພາກທີ ໒ ການຕັ້ງຣະບຽບຂຶ້ນໃໝ່ໃນສາສນາ — ບົດ ໗–໑໓

ກ. ລາຍຊື່ຄົນທີ່ໄດ້ຄືນມາກັບ ໂຊໂຣບາເບນ ບົດ ໗

ຂ. ການອ່ານພຣະບັນຍັດແລະການສັ່ງເທດ ບົດ ໘

ຄ. ການຖືສິນອົດອາຫານແລະການຍອມຜິດ ບົດ ໙

ງ. ຄຳສັນຍາໃໝ່ແລະການຈັດການຕ່າງໆ ບົດ ໑໐–໑໓